ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 348 /ລບ
ນະຄອນຫຼວງວຽງຈັນ, ວັນທີ 11.11.2022

# ດຳລັດ
# ວ່າດ້ວຍ ການຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ໜັງສືສະເໜີຂອງກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 4468/ກປ, ລົງວັນທີ 03 ພະຈິກ 2022.

## ລັດຖະບານ ອອກດຳລັດ:
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ (ໄຊເຕັດ) ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ບໍ່ໃຫ້ມີການລັກລອບ ຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ແບບຜິດກົດໝາຍ ແລະ ການນຳໃຊ້ແບບດັບສູນ, ຮັບປະກັນ ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າ ໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ**

ການຄຸ້ມຄອງ ການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ແມ່ນ ການ ຈັດຕັ້ງປະຕິບັດ ບັນດາ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຕາມບັນຊີ I, II ແລະ III ຂອງ ໄຊເຕັດ ໃຫ້ຖືກຕ້ອງຕາມ ກົດໝາຍ, ມີປະສິດທິຜົນ ແລະ ຮັບປະກັນຄວາມຍືນຍົງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໄຊເຕັດ (CITES: Convention on International Trade in Endangered Species of Wild Fauna and Flora)** ໝາຍເຖິງ ສົນທິສັນຍາ ວ່າດ້ວຍການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຊຶ່ງຖືກຮັບຮອງ ຢູ່ນະຄອນວໍຊິງຕັນ ດີຊີ ໃນວັນທີ 3 ມີນາ 1973 ແລະ ສປປ ລາວ ເຂົ້າເປັນພາຄີ ໃນວັນທີ 1 ມີນາ 2004;
2. **ກອງເລຂາໄຊເຕັດ (CITES Secretariat)** ໝາຍເຖິງ ກອງເລຂາ ທີ່ເຮັດໜ້າທີ່ ເປັນໃຈກາງລວບ ລວມ ແລະ ສັງລວມບັນດາຂໍ້ມູນ ຂ່າວສານ ແລະ ບົດລາຍງານ, ອຳນວຍຄວາມສະດວກ ໃນການຈັດກອງປະຊຸມ ແລະ ໃນທຸກການເຄື່ອນໄຫວຂອງບັນດາປະເທດພາຄີ, ພ້ອມທັງແຈ້ງທຸກການເຄື່ອນໄຫວທີ່ກ່ຽວຂ້ອງ ຂອງບັນດາປະເທດພາຄີ ໂດຍຜ່ານເວັບໄຊ (https://cites.org/eng/disc/sec/index.php), ມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນເຊີແນວ ປະເທດສະວິດເຊີແລນ;
3. **ປະເທດພາຄີ** ໝາຍເຖິງ ປະເທດທີ່ໄດ້ ເຂົ້າຮ່ວມລົງນາມ ແລະ ໃຫ້ສັດຕະຍາບັນຕໍ່ໄຊເຕັດ;
4. **ກອງປະຊຸມບັນດາປະເທດພາຄີ** (COP: Conference of the Parties) ໝາຍເຖິງ ກອງປະຊຸມທີ່ຈັດຂຶ້ນຢ່າງໜ້ອຍທຸກ ສອງປີ ເພື່ອຕັດສິນບັນຫາສຳຄັນຕ່າງໆກ່ຽວກັບໄຊເຕັດ ຕາມທີ່ກຳນົດໄວ້ໃນໄຊເຕັດ;
5. **ຈຸດປະສົງທາງການຄ້າ** ໝາຍເຖິງ ການດຳເນີນກິດຈະກຳ ທີ່ກ່ຽວຂ້ອງກັບການ ຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ເພື່ອຜົນປະໂຫຍດທາງເສດຖະກິດ (ອາດຈະເປັນເງິນສົດ ຫຼື ຮູບແບບອື່ນ);
6. **ຈຸດປະສົງທີ່ບໍ່ແມ່ນທາງການຄ້າ** ໝາຍເຖິງ ການດຳເນີນກິດຈະກຳ ທີ່ກ່ຽວຂ້ອງກັບ ສັດນ້ຳ, ສັດປ່າ ແລະ ພືດປ່າ ເພື່ອການຄົ້ນຄວ້າທາງດ້ານວິທະຍາສາດ, ການຝຶກອົບຮົມ ຫຼື ການສຶກສາ, ການແລກປ່ຽນ ລະຫວ່າງ ສວນສັດ ແລະ ສວນພຶກສາຊາດ, ການສືບສວນ-ສອບສວນ, ການຈັດສົ່ງຄືນ ສັດນ້ຳ, ສັດປ່າ ແລະ ພືດປ່າ ລະຫວ່າງ ໜ່ວຍງານຄຸ້ມຄອງໄຊເຕັດແລະ ການແລກປ່ຽນທາງດ້ານວັດທະນະທຳ;
7. **ສັດນ້ຳ** ໝາຍເຖິງ ສັດທຸກຊະນິດ ທີ່ເກີດ ແລະ ຂະຫຍາຍຕົວ ຢູ່ໃນນ້ຳ ທຳມະຊາດ ຫຼື ຖືກນຳເອົາຈາກທຳມະຊາດ ມາລ້ຽງ ແລະ ຂະຫຍາຍພັນ;
8. **ສັດປ່າ** ໝາຍເຖິງ ສັດທຸກຊະນິດ ຊຶ່ງປະກອບດ້ວຍ ສັດເຄິ່ງບົກເຄິ່ງນ້ຳ, ສັດລ້ຽງລູກດ້ວຍນົມ, ສັດເລືອຄານ ແລະ ສັດປີກ ທີ່ເກີດ ແລະ ຂະຫຍາຍຕົວ ຢູ່ໃນທຳມະຊາດ ຫຼື ຖືກນຳເອົາຈາກທຳມະຊາດ ມາລ້ຽງ ແລະ ຂະຫຍາຍພັນ;
9. **ພືດປ່າ** ໝາຍເຖິງ ຕົ້ນໄມ້ ແລະ ພືດ ທຸກຊະນິດທີ່ເກີດຂຶ້ນໃນປ່າ ແລະ ໃນນ້ຳ ລວມທັງພືດ ແລະ ຕົ້ນໄມ້ທີ່ໄດ້ນຳມາຈາກປ່າ ແລະ ນ້ຳ ເພື່ອປູກ ຫຼື ຂະຫຍາຍພັນ;
10. **ຊາກ** ໝາຍເຖິງ ສັດ ໝົດໂຕ ແລະ ພືດ ທີ່ຕາຍແລ້ວ;
11. **ຊິ້ນສ່ວນ** ໝາຍເຖິງ ພາກສ່ວນໃດໜຶ່ງ ຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ເຊັ່ນ ຫົວ, ເລັບ, ເຂົາ, ງາ, ກະດູກ, ບີ, ນ້ຳມັນ, ອອງ, ຂົນ, ເກັດ, ແຂ້ວ, ເລືອດ, ໜັງ, ໃບ, ໝາກ, ແກ່ນ, ເຄືອ, ຮາກ, ຫົວ ແລະ ພາກສ່ວນອື່ນ;
12. **ຜະລິດຕະພັນ** ໝາຍເຖິງ ການນຳເອົາຊິ້ນສ່ວນ ຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ນຳມາປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ເຊັ່ນ ອາຫານ, ຢາປົວພະຍາດ, ເຄື່ອງປະດັບ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງດົນຕີ, ເຄື່ອງໃຊ້ເຂົ້າໃນການສຶກສາ ແລະ ອື່ນໆ;
13. **ສະພາບແວດລ້ອມທີ່ຖືກຄວບຄຸມ** ໝາຍເຖິງ ສະພາບແວດລ້ອມທີ່ບໍ່ແມ່ນຖິ່ນທີ່ຢູ່ອາໄສທຳມະຊາດ ຊຶ່ງຖືກສ້າງຂຶ້ນມາໂດຍມະນຸດ ເພື່ອຂະຫຍາຍພັນ ຫຼື ຜະລິດສັດປ່າ ແລະ ພືດປ່າ ໂດຍມີການກຳນົດຂອບເຂດພື້ນທີ່ທີ່ຖືກອອກແບບມາເພື່ອລ້ຽງໃຫ້ເຕີບໃຫຍ່ ແລະ ປອດໄພ;
14. **ການຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍ** (LAF: Legal Acquisition Finding) ໝາຍເຖິງ ການຢັ້ງຢືນການໄດ້ມາຂອງສັດນ້ຳ, ສັດປ່າ ແລະ ພືດປ່າ ຢ່າງຖືກຕ້ອງຕາມກົດໝາຍ;

15. **ການສຶກສາຄວາມຢູ່ລອດ** (NDF: Non-Detriment Finding) ໝາຍເຖິງ ການສຶກສາໂດຍໜ່ວຍງານຢັ້ງຢືນທາງວິທະຍາສາດໄຊເຕັດເພື່ອຢັ້ງຢືນວ່າ ການສົ່ງອອກສັດນໍ້າ, ສັດປ່າ ແລະ ພືດປ່າຈະບໍ່ສົ່ງຜົນກະທົບຕໍ່ຄວາມຢູ່ລອດຂອງສັດນໍ້າ, ສັດປ່າ ແລະ ພືດປ່າ ດັ່ງກ່າວ.

**ມາດຕາ 4 ຫຼັກການກ່ຽວກັບ ວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ**

ວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ກ່ຽວຂ້ອງ;
2. ປົກປ້ອງຜົນປະໂຫຍດ ຂອງລັດ, ການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ທີ່ໄດ້ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້;
3. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ສັດນໍ້າ, ສັດປ່າ ແລະ ພືດປ່າ ຢ່າງມີປະສິດທິຜົນ ແລະ ຮັບປະກັນຄວາມຍືນຍົງ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຢູ່ ສປປ ລາວ.

## ໝວດທີ 2
## ບັນຊີ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ

**ມາດຕາ 6 ບັນຊີ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ**

ບັນຊີ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ປະກອບມີ ສາມບັນຊີ ດັ່ງນີ້:

1. ບັນຊີ I ແມ່ນ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ຖືກໄພຂົ່ມຂູ່ ແລະ ມີຄວາມສ່ຽງຕໍ່ການສູນພັນ, ໄດ້ຮັບຜົນກະທົບຈາກການ ລ່າ, ຂຸດຄົ້ນ, ຄ້າຂາຍ ແລະ ການນຳໃຊ້ແບບດັບສູນ;
2. ບັນຊີ II ແມ່ນ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ຍັງບໍ່ຖືກໄພຂົ່ມຂູ່ຕໍ່ການສູນພັນໃນປັດຈຸບັນ ແຕ່ໃນຕໍ່ ໜ້າອາດຈະສູນພັນ ຖ້າບໍ່ມີການຄຸ້ມຄອງ ທີ່ດີ;
3. ບັນຊີ III ແມ່ນ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ສາມາດຂະຫຍາຍພັນໄດ້ຕາມທຳມະຊາດຢ່າງກວ້າງ ຂວາງ ແຕ່ອາດມີຄວາມສ່ຽງໄດ້ຮັບຜົນກະທົບທາງລົບໃນຕໍ່ໜ້າ ຊຶ່ງປະເທດພາຄີໃດໜຶ່ງໄດ້ສະເໜີໃຫ້ມີການປົກປ້ອງ ໂດຍຂໍຮ້ອງໃຫ້ປະເທດພາຄີອື່ນຮ່ວມມືໃນການຄວບຄຸມ ການຄ້າຂາຍ.

**ມາດຕາ 7 ການປັບປຸງ ບັນຊີ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ**

ໃນກໍລະນີຈຳເປັນຕ້ອງປັບປຸງບັນຊີ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໜ່ວຍງານຄຸ້ມຄອງໄຊເຕັດ ປະສານສົມທົບກັບ ໜ່ວຍງານຢັ້ງຢືນທາງວິທະຍາສາດໄຊເຕັດ ດຳເນີນການສຶກສາ ເພື່ອກະກຽມເອກະສານ ຂໍ້ມູນ, ເຫດຜົນທີ່ຈຳເປັນ, ສະຖານະພາບ, ໄພຂົ່ມຂູ່ ຂອງ ສັດນໍ້າ, ສັດປ່າ ແລະ ພືດປ່າ ກ່ຽວກັບ ການເພີ່ມເຂົ້າ; ເລື່ອນຂຶ້ນ, ຫຼຸດລົງ ແລະ ຕັດອອກ ຈາກບັນຊີໄຊເຕັດ ເພື່ອສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ຮັບຮອງ ແລ້ວນຳສະເໜີຕໍ່ ກອງປະຊຸມບັນດາປະເທດພາຄີ ພິຈາລະນາຕາມຂັ້ນຕອນ ຂອງໄຊເຕັດ.

ກອງເລຂາໄຊເຕັດ ຈະເປີດກອງປະຊຸມບັນດາປະເທດພາຄີ ເພື່ອທົບທວນຄືນການຈັດຕັ້ງປະຕິບັດສົນທິສັນຍາໄຊເຕັດ ພ້ອມທັງ ພິຈາລະນາ, ດັດແກ້ ແລະ ຮັບຮອງ ບັນຊີ I ແລະ ບັນຊີ II ຕາມການເຫັນດີຂອງສຽງສ່ວນຫຼາຍ ຈາກບັນດາປະເທດພາຄີ ທີ່ເຂົ້າຮ່ວມກອງປະຊຸມ. ການສະເໜີ ບັນຊີ III ແຕ່ລະປະເທດພາຄີ ມີສິດສະເໜີຝ່າຍດຽວ. ບັນຊີດັ່ງກ່າວ ຈະຖືກເຜີຍແຜ່ຢ່າງເປັນທາງການ ໃນເວັບໄຊຂອງໄຊເຕັດ (https://cites.org/ eng/disc/sec/index.php).

## ໝວດທີ 3
## ການຂຶ້ນທະບຽນ ແລະ ແຈ້ງບັນຊີ

### ມາດຕາ 8 ການຂຶ້ນທະບຽນ ແລະ ແຈ້ງບັນຊີ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີການຄອບຄອງ ແລະ ຂະຫຍາຍພັນ ສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ທີ່ນອນໃນບັນຊີໄຊເຕັດ ຫາກມີຈຸດປະສົງ ເພື່ອການຄ້າຂາຍລະຫວ່າງຊາດ ຕ້ອງຂຶ້ນທະບຽນ ແລະ ແຈ້ງບັນຊີການຄອບຄອງ ນຳໜ່ວຍງານຄຸ້ມຄອງໄຊເຕັດ ແລະ ຕ້ອງເກັບຮັກສາຂໍ້ມູນ ກ່ຽວກັບຈຳນວນ ສັດປ່າ ແລະ ພືດປ່າ ລວມທັງ ຂໍ້ມູນທຸກທຸລະກຳການຄ້າຂາຍ. ໜ່ວຍງານຄຸ້ມຄອງໄຊເຕັດ ມີສິດກວດກາເຄຫາສະຖານ ແລະ ຂໍ້ມູນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຂຶ້ນທະບຽນ.

ເອກະສານຂໍຂຶ້ນທະບຽນ ແລະ ແຈ້ງບັນຊີ ປະກອບດ້ວຍ:

1. ຄຳຮ້ອງຂໍຂຶ້ນທະບຽນ ຕາມແບບພິມທີ່ ໜ່ວຍງານຄຸ້ມຄອງໄຊເຕັດ ຂອງ ສປປ ລາວ ກຳນົດ;
2. ບັນຊີ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ຢູ່ໃນການຄອບຄອງຂອງຕົນ.

### ມາດຕາ 9 ການພິຈາລະນາຂຶ້ນທະບຽນ ແລະ ແຈ້ງບັນຊີ

ພາຍຫຼັງ ໄດ້ຮັບຄຳຮ້ອງຂໍຂຶ້ນທະບຽນ ແລະ ແຈ້ງບັນຊີການຄອບຄອງ ໜ່ວຍງານຄຸ້ມຄອງ ໄຊເຕັດ ຄົ້ນຄວ້າພິຈາລະນາ ຂຶ້ນທະບຽນ ແລະ ແຈ້ງບັນຊີການຄອບຄອງ ພ້ອມທັງອອກໃບທະບຽນ ໃຫ້ຜູ້ຮ້ອງຂໍ ພາຍໃນກຳນົດເວລາ ສາມສິບວັນ. ໃນກໍລະນີບໍ່ສາມາດຂຶ້ນທະບຽນ ແລະ ແຈ້ງບັນຊີການຄອບຄອງ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງເຫດຜົນ ໃຫ້ຜູ້ຮ້ອງຂໍຊາບ.

## ໝວດທີ 4
## ການຄ້າຂາຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ສົ່ງຜ່ານ

### ມາດຕາ 10 ການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ

ການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ຕາມບັນຊີຂອງ ໄຊເຕັດລວມທັງ ຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ໃຫ້ປະຕິບັດດັ່ງນີ້:

ບັນຊີ I ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຄ້າຂາຍ ຢ່າງເດັດຂາດ ເວັ້ນເສຍແຕ່ໃນກໍລະນີ ຈຸດປະສົງ ທີ່ບໍ່ແມ່ນທາງການຄ້າ ແຕ່ຕ້ອງໄດ້ຮັບອະນຸຍາດ ຈາກໜ່ວຍງານຄຸ້ມຄອງໄຊເຕັດ. ໃນກໍລະນີ ທີ່ຖືກຂະຫຍາຍພັນໃນສະພາບແວດລ້ອມທີ່ຖືກຄວບຄຸມ ທີ່ໄດ້ຂຶ້ນທະບຽນນຳໜ່ວຍງານຄຸ້ມຄອງໄຊເຕັດ ແລະ ຖືກໃສ່ກາໝາຍສະເພາະ ຊຶ່ງບໍ່ສາມາດປ່ຽນແປງ ຫຼື ດັດແກ້ກາໝາຍດັ່ງກ່າວໄດ້ ອະນຸຍາດໃຫ້ຄ້າຂາຍໄດ້ ແລະ ໃຫ້ປະຕິບັດ ຄືກັນກັບ ບັນຊີ II.

ບັນຊີ II ອະນຸຍາດໃຫ້ຄ້າຂາຍໄດ້ ແຕ່ຕ້ອງເຮັດການສຶກສາຄວາມຢູ່ລອດຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າຊະນິດພັນ ຈາກໜ່ວຍງານຢັ້ງຢືນທາງວິທະຍາສາດ ຕາມແຈ້ງການ ຂອງກອງເລຂາໄຊເຕັດ ແຕ່ລະໄລຍະ ແລະ ຕ້ອງໄດ້ຮັບອະນຸຍາດ ຈາກໜ່ວຍງານຄຸ້ມຄອງໄຊເຕັດ.

ບັນຊີ III ອະນຸຍາດໃຫ້ຄ້າຂາຍໄດ້ ແຕ່ຕ້ອງໄດ້ຮັບອະນຸຍາດ ຈາກໜ່ວຍງານຄຸ້ມຄອງໄຊເຕັດ.

**ມາດຕາ 11 ການນຳເຂົ້າ**

ການນຳເຂົ້າ ແມ່ນ ການນຳເອົາ ສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ເຂົ້າມາລ້ຽງ, ຂະຫຍາຍພັນ ແລະ ນຳໃຊ້ ໃນ ສປປ ລາວ.

ການນຳເຂົ້າ ໃນບັນຊີ I ເພື່ອຈຸດປະສົງທີ່ບໍ່ແມ່ນທາງການຄ້າ ຜູ້ນຳເຂົ້າ ຕ້ອງມີໃບອະນຸຍາດສົ່ງອອກ ຫຼື ໃບອະນຸຍາດສົ່ງອອກຄືນ ຈາກອົງການທີ່ກ່ຽວຂ້ອງ ຂອງປະເທດຕົ້ນທາງ, ໃບຢັ້ງຢືນຖິ່ນກຳເນີດ, ໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນສຸຂານາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນ, ສັນຍາລະຫວ່າງຜູ້ນຳເຂົ້າ ແລະ ສົ່ງອອກ, ລາຍການບັນຊີປະເພດ, ຈຳນວນ ທີ່ຈະນຳເຂົ້າ, ມີສະຖານທີ່ຮອງຮັບຢ່າງເໝາະສົມ ແລະ ຢືນຢັນວ່າຈະບໍ່ຖືກນຳໃຊ້ ເພື່ອຈຸດປະສົງທາງດ້ານການຄ້າ ແລ້ວໜ່ວຍງານຄຸ້ມຄອງໄຊເຕັດ ຂອງ ສປປ ລາວ ຈຶ່ງອອກໃບອະນຸຍາດນຳເຂົ້າ ບົນພື້ນຖານການຢັ້ງຢືນ ຂອງ ໜ່ວຍງານຢັ້ງຢືນທາງດ້ານວິທະຍາສາດ.

ການນຳເຂົ້າ ໃນບັນຊີ II ແລະ ບັນຊີ III ຜູ້ນຳເຂົ້າ ຕ້ອງມີໃບອະນຸຍາດສົ່ງອອກ ຫຼື ໃບອະນຸຍາດສົ່ງອອກຄືນ ຈາກອົງການທີ່ກ່ຽວຂ້ອງ ຂອງປະເທດຕົ້ນທາງ, ໃບຢັ້ງຢືນຖິ່ນກຳເນີດ, ໃບຢັ້ງຢືນສຸຂາພາບສັດ ຫຼື ໃບຢັ້ງຢືນສຸຂະນາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນ, ສັນຍາລະຫວ່າງຜູ້ນຳເຂົ້າ ແລະ ສົ່ງອອກ, ລາຍການບັນຊີປະເພດ, ຈຳນວນທີ່ຈະນຳເຂົ້າ, ໃບອະນຸຍາດນຳເຂົ້າ ແລະ ມີສະຖານທີ່ຮອງຮັບຢ່າງເໝາະສົມ.

ໃບອະນຸຍາດນຳເຂົ້າ ຈະອອກໃຫ້ສະເພາະໃນກໍລະນີ ໜ່ວຍງານຢັ້ງຢືນທາງວິທະຍາສາດ ຂອງປະເທດຕົ້ນທາງ ໄດ້ຢັ້ງຢືນວ່າ ການນຳເຂົ້າ ແມ່ນເພື່ອຈຸດປະສົງທີ່ບໍ່ມີຄວາມສ່ຽງຕໍ່ການສູນພັນຂອງສັດນ້ຳ, ສັດປ່າ ແລະ ພືດປ່າ ໃນທຳມະຊາດ.

**ມາດຕາ 12 ການສົ່ງອອກ**

ການສົ່ງອອກ ສັດນ້ຳ, ສັດປ່າ, ພືດປ່າ ລວມທັງຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ຕາມບັນຊີ I ແມ່ນອະນຸຍາດໃຫ້ສະເພາະ ເປົ້າໝາຍການແລກປ່ຽນອັດທະນາທຳ ແລະ ການຄົ້ນຄ້ວາວິທະຍາສາດ ເທົ່ານັ້ນ. ສຳລັບ ການປະກອບເອກະສານ ສົ່ງອອກ ແມ່ນໃຫ້ປະຕິບັດຄືກັນກັບການສົ່ງອອກບັນຊີ II ແລະ ບັນຊີ III ແຕ່ບໍ່ຈຳເປັນຕ້ອງມີແຜນຄຸ້ມຄອງຄວາມສ່ຽງ ຕໍ່ການສູນພັນ (Non-detriment Findings).

ການສົ່ງອອກ ສັດນ້ຳ, ສັດປ່າ, ພືດປ່າ ລວມທັງຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ຕາມບັນຊີ II ຂອງສົນທິສັນຍາໄຊເຕັດ ແມ່ນອະນຸຍາດ ເພື່ອເປົ້າໝາຍດ້ານການຄ້າ ໂດຍມີແຜນຄຸ້ມຄອງຄວາມສ່ຽງ ຕໍ່ການສູນພັນ (Non-detriment Findings).

ການສົ່ງອອກ ສັດນ້ຳ, ສັດປ່າ, ພືດປ່າ ລວມທັງຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ຕ້ອງປະກອບມີເອກະສານ ຄື:

1. ໃບອະນຸຍາດສົ່ງອອກ ຈາກໜ່ວຍງານຄຸ້ມຄອງ ປະເທດຕົ້ນທາງ;
2. ໃບອະນຸຍາດນຳເຂົ້າ ຂອງໜ່ວຍງານຄຸ້ມຄອງ ປະເທດປາຍທາງ;
3. ໃບຢັ້ງຢືນຖິ່ນກຳເນີດ ຫຼື ແຫຼ່ງທີ່ມາ ດ້ານວິທະຍາສາດ ຈາກໜ່ວຍງານວິທະຍາສາດ ປະເທດປາຍທາງ ແລະ ຕົ້ນທາງ;
4. ໃບຢັ້ງຢືນ ການຂະຫຍາຍພັນ ຫຼື ລ້ຽງ;
5. ໃບຢັ້ງຢືນສຸຂະພາບ ຫຼື ໃບຢັ້ງຢືນປອດພະຍາດ ຫຼື ໃບຢັ້ງຢືນສຸຂານາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນ;
6. ໃບສັນຍາລະຫວ່າງ ຜູ້ສົ່ງອອກ ແລະ ຜູ້ນຳເຂົ້າ;
7. ລາຍການບັນຊີ ແລະ ຈຳນວນ ປະເພດ ສັດນ້ຳ, ສັດປ່າ, ພືດປ່າ ຫຼື ຊິ້ນສ່ວນ ແລະ ຜະລິດຕະພັນຕ່າງໆ;
8. ມີສະຖານທີ່ຮອງຮັບຢ່າງ ເໝາະສົມ.

**ມາດຕາ 13 ການສົ່ງອອກຄືນ**

ການສົ່ງອອກຄືນ ແມ່ນ ການນໍາເອົາ ສັດນໍ້າ, ສັດປ່າ, ພືດປ່າ ລວມທັງ ຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ທີ່ຖືກນໍາເຂົ້າມາໃນເມື່ອກ່ອນ ອອກຈາກ ສປປ ລາວ ຄືນປະເທດຕົ້ນທາງ ຫຼື ປະເທດທີ ສາມ ຕາມລະບຽບການ.

ການສົ່ງອອກຄືນ ນອກຈາກການປະກອບເອກະສານທີ່ໄດ້ກໍານົດໄວ້ໃນ ມາດຕາ 11 ຂອງດໍາລັດ ສະບັບນີ້ແລ້ວ ຍັງຕ້ອງມີໃບແຈ້ງຂຶ້ນທະບຽນສັດ, ໃບຢັ້ງຢືນກ່ຽວກັບການຂະຫຍາຍພັນ ຫຼື ການລ້ຽງ ສັດນໍ້າ, ສັດປ່າ ແລະ ພືດປ່າ ລວມທັງ ຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ທີ່ຈະສົ່ງອອກ, ໃບອະນຸຍາດສົ່ງອອກຄືນ ແລະ ໃບອະນຸຍາດນໍາເຂົ້າ ຂອງອົງການທີ່ກ່ຽວຂ້ອງ ຂອງປະເທດປາຍທາງ.

**ມາດຕາ 14 ການສົ່ງຜ່ານ**

ການສົ່ງຜ່ານ ແມ່ນ ການນໍາເອົາ ສັດນໍ້າ, ສັດປ່າ ແລະ ພືດປ່າ ລວມທັງ ຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ຜ່ານ ສປປ ລາວ ໄປປະເທດອື່ນ ນອກຈາກປະຕິບັດຕາມລະບຽບການ ຂອງຂະແໜງທີ່ກ່ຽວຂ້ອງແລ້ວ, ຜູ້ສົ່ງຜ່ານ ຕ້ອງໄດ້ແຈ້ງ ໃບອະນຸຍາດສົ່ງອອກ ຂອງອົງການກ່ຽວຂ້ອງ ຂອງ ປະເທດຕົ້ນທາງ ແລະ ໃບອະນຸຍາດນໍາເຂົ້າ ຂອງປະເທດປາຍທາງ, ໃບຢັ້ງຢືນຖິ່ນກໍາເນີດ, ໃບຢັ້ງຢືນສຸຂາພາບສັດ ຫຼື ໃບຢັ້ງຢືນສຸຂະນາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນ, ລາຍການບັນຊີປະເພດ ແລະ ຈໍານວນທີ່ຈະນໍາຜ່ານ ເພື່ອຂໍອະນຸຍາດ ນໍາຜ່ານ ຈາກໜ່ວຍງານຄຸ້ມຄອງໄຊເຕັດ ຂອງ ສປປ ລາວ.

**ມາດຕາ 15 ການຮ້ອງຂໍໃບອະນຸຍາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຮ້ອງຂໍໃບອະນຸຍາດການ ນໍາເຂົ້າ ແລະ ສົ່ງອອກ, ສົ່ງອອກຄືນ ແລະ ສົ່ງຜ່ານ ສັດນໍ້າ, ສັດປ່າ ແລະ ພືດປ່າ ລວມທັງ ຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ໃຫ້ຍື່ນຄໍາຮ້ອງຂໍໃບອະນຸຍາດ ພ້ອມດ້ວຍເອກະສານຄົບຊຸດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 11, 12, 13 ແລະ 14 ຂອງ ດໍາລັດ ສະບັບນີ້ ຕໍ່ໜ່ວຍງານຄຸ້ມຄອງໄຊເຕັດ.

ຄໍາຮ້ອງຂໍໃບອະນຸຍາດ ແຕ່ລະປະເພດ ມີແບບພິມສະເພາະ ຊຶ່ງໜ່ວຍງານຄຸ້ມຄອງໄຊເຕັດ ເປັນຜູ້ກໍານົດ.

ການນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ການສົ່ງຜ່ານ ສັດນໍ້າ, ສັດປ່າ ແລະ ພືດປ່າ ລວມທັງ ຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ຕ້ອງໄດ້ເສຍຄ່າທໍານຽມ ແລະ ຄ່າບໍລິການ ຕາມທີ່ໄດ້ກໍານົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 16 ການພິຈາລະນາ**

ພາຍຫຼັງ ໜ່ວຍງານຄຸ້ມຄອງໄຊເຕັດ ໄດ້ຮັບຄໍາຮ້ອງຂໍໃບອະນຸຍາດແລ້ວ ຕ້ອງຄົ້ນຄວ້າພິຈາລະນາ ອອກໃບອະນຸຍາດ ພາຍໃນກໍານົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍໃບອະນຸຍາດ ເປັນຕົ້ນໄປ. ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງເຫດຜົນ ໃຫ້ຜູ້ຮ້ອງຂໍຊາບ.

ໃບອະນຸຍາດ ສົ່ງອອກ ແລະ ສົ່ງອອກຄືນ ມີອາຍຸການນໍາໃຊ້ ຫົກ ເດືອນ ນັບແຕ່ວັນອອກ ໃບອະນຸຍາດ ເປັນຕົ້ນໄປ. ສໍາລັບ ໃບອະນຸຍາດນໍາເຂົ້າ ມີອາຍຸການນໍາໃຊ້ ສິບສອງ ເດືອນ ນັບແຕ່ວັນ ອອກໃບອະນຸຍາດ ເປັນຕົ້ນໄປ. ໃບອະນຸຍາດແຕ່ລະໃບ ແມ່ນສາມາດນໍາໃຊ້ໄດ້ພຽງຄັ້ງດຽວ.

ໃນກໍລະນີທີ່ ໜ່ວຍງານຄຸ້ມຄອງໄຊເຕັດ ກວດພົບວ່າ ມີການບິດເບືອນ, ປອມແປງ ເອກະສານ ແລະ ນໍາໃຊ້ເອກະສານປອມ ຫຼື ບໍ່ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ໜ່ວຍງານຄຸ້ມຄອງໄຊເຕັດ ສາມາດລຶບລ້າງ ໃບອະນຸຍາດທີ່ອອກໃຫ້.

## ໝວດທີ 5
## ໜ່ວຍງານຄຸ້ມຄອງໄຊເຕັດ ແລະ ໜ່ວຍງານຢັ້ງຢືນທາງວິທະຍາສາດໄຊເຕັດ

### ມາດຕາ 17 ໜ່ວຍງານຄຸ້ມຄອງ ໄຊເຕັດ

ໜ່ວຍງານຄຸ້ມຄອງ ໄຊເຕັດ (CITES MA: CITES Management Authority) ແມ່ນ ໜ່ວຍງານໜຶ່ງທີ່ຂຶ້ນກັບ ກົມປ່າໄມ້ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກ ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ເຮັດໜ້າທີ່ ໃນການຈັດຕັ້ງປະຕິບັດ ໄຊເຕັດ.

ໜ່ວຍງານຄຸ້ມຄອງ ໄຊເຕັດ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແນວທາງ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ກ່ຽວກັບ ວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
3. ຄຸ້ມຄອງ ແລະ ເກັບຮັກສາ ສັດນໍ້າ, ສັດປ່າ ແລະ ພືດປ່າ ລວມທັງຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ທີ່ໄດ້ຈາກການຍຶດ ຫຼື ການຕັດສິນຂອງສານ ເພື່ອຮັບໃຊ້ເຂົ້າໃນວຽກງານສຶກສາຄົ້ນຄວ້າ;
4. ຂຶ້ນທະບຽນ ແລະ ອອກໃບທະບຽນ;
5. ອອກໃບອະນຸຍາດ ຫຼື ໃບຢັ້ງຢືນ ການນໍາເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ການສົ່ງຜ່ານ ສັດນໍ້າ, ສັດປ່າ ແລະ ພືດປ່າ ລວມທັງຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ;
6. ສ້າງ ແລະ ພັດທະນາ ລະບົບຂໍ້ມູນ ຂ່າວສານ, ກົນໄກການຮ່ວມມື, ແລກປ່ຽນຂໍ້ມູນ ຂ່າວສານ ຈາກຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ທັງພາຍໃນ ແລະ ຕ່າງປະເທດ;
7. ເຂົ້າຮ່ວມກອງປະຊຸມ, ສໍາມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
8. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ຄຸ້ມຄອງ ການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ລວມທັງຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ ທີ່ຜິດກົດໝາຍ;
9. ສະຫຼຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຄ້າຂາຍສັດນໍ້າ, ສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນ ລະຫວ່າງຊາດ ໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ຢ່າງເປັນປົກກະຕິ;
10. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 18 ໜ່ວຍງານຢັ້ງຢືນທາງວິທະຍາສາດໄຊເຕັດ

ໜ່ວຍງານຢັ້ງຢືນທາງວິທະຍາສາດ ໄຊເຕັດ (CITES SA: CITES Scientific Authority) ແມ່ນໜ່ວຍງານໜຶ່ງ ທີ່ຂຶ້ນກັບ ຄະນະວິທະຍາສາດປ່າໄມ້ ໂດຍໄດ້ຮັບການແຕ່ງຕັ້ງຈາກ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເຮັດໜ້າທີ່ ຄົ້ນຄວ້າ ແລະ ຢັ້ງຢືນທາງດ້ານວິທະຍາສາດ.

ໜ່ວຍງານຢັ້ງຢືນທາງວິທະຍາສາດ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ລະບຽບການ ກ່ຽວກັບ ໄຊເຕັດ ເອັສເອ;
2. ໂຄສະນາ ເຜີຍແຜ່, ລະບຽບການ ກ່ຽວກັບ ໄຊເຕັດ ເອັສເອ;

3. ສ້າງແຜນ ຄຸ້ມຄອງຄວາມຢູ່ລອດຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ເພື່ອຮັບປະກັນຄວາມຍືນຍົງ ຂອງ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫ່າງຊາດ ເພື່ອຍັ້ງຢືນ ແລະ ນຳສະເໜີ ກະຊວງກະສິກຳ ແລະ ປ່າໄມ້ ອະນຸມັດໂກຕ້າສົ່ງອອກ ປະຈຳປີ ຕາມຄວາມເໝາະສົມ;
4. ດຳເນີນການສຶກສາຄົ້ນຄວ້າ, ທົດລອງ, ວິເຄາະ, ວິໄຈ ແລະ ພິສູດແຫຼ່ງກຳເນີດ (DNA) ພ້ອມ ທັງອອກໃບຢັ້ງຢືນແຫຼ່ງກຳເນີດ ສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງຜະລິດຕະພັນ, ຊາກ ຫຼື ຊິ້ນສ່ວນ;
5. ເກັບກຳ ແລະ ວິເຄາະຂໍ້ມູນ ຂ່າວສານ ກ່ຽວກັບ ສະພາບດ້ານຊີວະວິທະຍາ ຂອງສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໄດ້ຮັບຜົນກະທົບຈາກ ການຊື້, ຂາຍ ເພື່ອກະກຽມ ບົດສະເໜີ ດັດແກ້ບັນຊີຂອງ ໄຊເຕັດ ຕາມຄວາມເໝາະສົມ;
6. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບ ວຽກງານຄຸ້ມ ຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
7. ປະສານ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນ ບັນຊີ ສັດນ້ຳ, ສັດປ່າ ແລະ ພືດ ປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ເພື່ອນຳສະເໜີ ຕໍ່ ກອງປະຊຸມບັນດາປະເທດພາຄີ;
8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ໜ່ວຍງານຄຸ້ມຄອງໄຊເຕັດ ຂອງກະຊວງກະສິກຳ ແລະ ປ່າໄມ້ຢ່າງເປັນປົກກະຕິ;
9. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 19 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ຮັບຜິດຊອບວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ຮັບຜິດຊອບວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດສ່ວນ ຕົວ, ຄອບຄົວ, ຍາດຕິພີ່ນ້ອງ ແລະ ພັກພວກຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບສິນບົນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ການປະຕິບັດ ໜ້າທີ່;
4. ກົດໜ່ວງ, ຖ່ວງດຶງ, ປອມແປງ ເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ;
5. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ບິດເບືອນຄວາມຈິງ, ປິດບັງ, ເຊື່ອງອຳ ແລະ ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືກັບຜູ້ກະທຳຜິດ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 20 ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ໃຫ້ສິນບົນ ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່, ປອມແປງເອກະສານ ແລະ ຕາປະທັບ;
2. ນາບຂູ່, ກົດໜ່ວງຖ່ວງດຶງ ແລະ ຂັດຂວາງການປະຕິບັດວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;

3. ນຳເອົາ ສັດນ້ຳ, ສັດປ່າ ແລະ ພືດປ່າບັນຊີ I ທີ່ຍັງມີຊີວິດ, ຊາກ, ຊິ້ນສ່ວນ ແລະ ອະໄວຍະວະຕ່າງໆ ຂອງສັດອອກຈາກ ຖິ່ນທີ່ຢູ່ອາໄສ ມາໄວ້ໃນຄອບຄອງ;
4. ທໍລະມານສັດ ທຸກຮູບແບບ;
5. ລັກລອບຫາ, ລ່າ, ຊື້, ຂາຍ ແລະ ມີໄວ້ໃນຄອບຄອງ ສັດນ້ຳ ແລະ ສັດປ່າ ໂດຍບໍ່ໄດ້ຮັບອະນຸຍາດ;
6. ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ນຳຜ່ານ ຫຼື ຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໂດຍບໍ່ຖືກຕ້ອງ ຕາມການອະນຸຍາດ ແລະ ກົດໝາຍ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ

### ມາດຕາ 21 ອົງການຄຸ້ມຄອງ ແລະ ກວດກາ

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງ ແລະ ກວດກາວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໂດຍກົງ ແລະ ເປັນໃຈກາງປະສານສົມທົບ ກັບກະຊວງສຶກສາທິການ ແລະ ກິລາ, ກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

### ມາດຕາ 22 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້

ໃນການຄຸ້ມຄອງ ແລະ ກວດກາ ວຽກງານໄຊເຕັດ ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບ ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າຊາດ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ກ່ຽວກັບ ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
4. ອອກ ແລະ ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
5. ຊີ້ນຳ ການຄຸ້ມຄອງ, ຕິດຕາມກວດກາ ການຈັດຕັ້ງປະຕິບັດ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
6. ເຂົ້າຮ່ວມ ແລະ ລາຍງານຜົນກອງປະຊຸມ ການຄຸ້ມຄອງ ການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ທັງພາຍໃນ ແລະ ຕ່າງປະເທດ;
7. ຂຶ້ນແຜນສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
8. ປະສານ ສົມທົບກັບ ອົງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
9. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
10. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງ ກະຊວງສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານໄຊເຕັດ ກະຊວງສຶກສາທິການ ແລະ ກິລາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງລະບຽບການ ກ່ຽວກັບ ວຽກງານຍັ້ງຢືນທາງວິທະຍາສາດ ແລະ ຈັດຕັ້ງປະຕິບັດ;
2. ໂຄສະນາ ເຜີຍແຜ່ ລະບຽບການ ກ່ຽວກັບ ວຽກງານຍັ້ງຢືນທາງວິທະຍາສາດ;
3. ອອກ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານຍັ້ງຢືນທາງວິທະຍາສາດ;
4. ຊີ້ນຳ ການຄຸ້ມຄອງ, ຕິດຕາມກວດກາ ການຈັດຕັ້ງປະຕິບັດ ກ່ຽວກັບວຽກງານຍັ້ງຢືນທາງວິທະຍາສາດ;
5. ເຂົ້າຮ່ວມກອງປະຊຸມ ທັງພາຍໃນ ແລະ ຕ່າງປະເທດ;
6. ຂຶ້ນແຜນສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານຍັ້ງຢືນທາງວິທະຍາສາດ;
7. ປະສານສົມທົບ ກັບອົງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານຍັ້ງຢືນທາງວິທະຍາສາດ;
8. ພົວພັນ ແລະ ຮ່ວມມື ກັບບັນດາປະເທດຕ່າງໆ ໃນພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຍັ້ງຢືນທາງວິທະຍາສາດ;
9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ກ່ຽວກັບ ວຽກງານຍັ້ງຢືນທາງວິທະຍາສາດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບອົງການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 25 ການກວດກາວຽກງານໄຊເຕັດ**

ການກວດກາວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກງານຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;
3. ການສ້າງ ແລະ ປະຕິບັດແຜນການກ່ຽວກັບວຽກງານຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ.

**ມາດຕາ 26 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ແມ່ນ ການກວດກາ ທີ່ມີລັກສະນະກວດກາ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງເທື່ອ ຕໍ່ປີ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຮູ້ລ່ວງໜ້າກ່ອນ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;

3. ການກວດກາ ແບບກະທັນຫັນ ແມ່ນ ການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ ແຕ່ການກວດການັ້ນ ໃຫ້ດຳເນີນຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຮູ້ກ່ອນລ່ວງໜ້າ. ການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງການຄ້າຂາຍ ສັດນໍ້າ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຢ່າງມີຄຸນນະພາບ ແລະ ດຳເນີນຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 29 ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ**

ໜ່ວຍງານຄຸ້ມຄອງ ໄຊເຕັດ ມີເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ທາງລັດຖະການ ຊຶ່ງ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ.

**ມາດຕາ 30 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 31 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 30 ທັນວາ 2022 ເປັນຕົ້ນໄປ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ